Australian Government

COVID-19 VACCINATION

# ຄຳແນະນຳອັບເດດກ່ຽວກັບການເປີດສັກຢາວັກຊີນຕ້ານ COVID-19

**17 ມິຖຸນາ 2021**

ຜູ້ຊ່ຽວຊານທາງການແພດໃນອອສເຕຣເລັຍ ໃນປັດຈຸບັນ ໄດ້ແນະນຳໃຫ້ສັກຢາວັກຊີນ Pfizer COVID-19 ໃຫ້ແກ່ຜູ້ໃຫຍ່ທີ່ມີອາຍຸຕ່ຳກວ່າ 60 ປີ. ຄຳແນະນຳແຕ່ກ່ອນໄດ້ເວົ້າວ່າຢາວັກ Pfizer ແມ່ນເໝາະສົມກວ່າສຳລັບຜູ້ໃຫຍ່ທີ່ມີອາຍຸຕ່ຳກວ່າ 50 ປີ.

ຄຳແນະນຳທີ່ໄດ້ຖືກອັບເດດຄັ້ງນີ້ແມ່ນອີງໃສ່ຫຼັກຖານໃໝ່ທີ່ສະແດງໃຫ້ເຫັນວ່າໄດ້ມີຄວາມສ່ຽງຫຼາຍກວ່າທີ່ຄາດຄິດໄວ້ແຕ່ຕົ້ນ ຂອງພາວະກ້ອນເລືອດອຸດຕັນທີ່ເກີດຂຶ້ນຍາກ ໃນກຸ່ມຄົນທີ່ມີອາຍຸລະຫວ່າງ 50-59 ປີ. ພາວະນີ້ເອີ້ນວ່າພາວະກ້ອນເລືອດອຸດຕັນເນື່ອງຈາກມີກຸ່ມອາການສະເກັດເລືອດຕ່ຳ, ຫຼື TTS.

ຢາວັກຊີນ AstraZeneca ຈະໄດ້ສັກໃຫ້ແກ່ຜູ້ທີ່ມີອາຍຸ 60 ປີແລະສູງກວ່ານັ້ນ. ສຳລັບຜູ້ທີ່ມີອາຍຸ 60 ປີແລະສູງກວ່ານັ້ນ, ຜົນປະໂຫຍດຈາກການສັກວັກຊີນແມ່ນມີຫຼາຍກວ່າຄວາມສ່ຽງຈາກການເກີດພາວະ TTS.

ການທີ່ໄດ້ສັກວັກຊີນຍັງເປັນວິທີການທີ່ສຳຄັນທີ່ສຸດໃນການປ້ອງກັນບໍ່ໃຫ້ເກີດການເຈັບປ່ວຍຮ້າຍແຮງຫຼືເສັຍຊີວິດຈາກ COVID-19. ມີຄົນຫຼາຍລ້ານຄົນທົ່ວໂລກທີ່ໄດ້ຮັບການສັກຢາຢ່າງປອດໄພ.

ຜູ້ທີ່ໄດ້ຮັບການສັກຢາໂດສທຳອິດເປັນຢາວັກຊີນ AstraZeneca COVID-19 ໂດຍບໍ່ມີຜົນຂ້າງຄຽງຮ້າຍແຮງໃດໆຄວນສືບຕໍ່ສັກໂດສທີສອງຂອງຕົນຕໍ່ໄປ. ອັນນີ້ແມ່ນລວມເຖິງຜູ້ໃຫຍ່ທີ່ມີອາຍຸຕ່ຳກວ່າ 60 ປີດ້ວຍ.

ການໄດ້ຮັບຢາໂດສທີ່ສອງຈະຊ່ວຍໃຫ້ມີການປົກປ້ອງທີ່ດີທີ່ສຸດຈາກການເຈັບປ່ວຍຮ້າຍແຮງຍ້ອນ COVID-19. ຖ້າທ່ານໄດ້ຮັບການສັກຢາໂດສທີໜຶ່ງແລ້ວ ທ່ານຄວນນັດຈອງໄປສັກຢາໂດສທີສອງຂອງທ່ານ.

ຄລີນິກສັກຢາວັກຊີນຂອງລັດຖະບານທີ່ໄດ້ສັກຢາວັກຊີນ Pfizer ໃຫ້ຢູ່ແລ້ວກໍຈະເລີ່ມຮັບເອົາຄົນທີ່ມີອາຍຸລະຫວ່າງ 50-59 ປີ ທັນທີ ເພື່ອຮັບການສັກຢາ Pfizer.

ຄົນໃນປະເທດອອສເຕຣເລັຍສາມາດໝັ້ນໃຈໄດ້ວ່າຜູ້ຊ່ຽວຊານທາງການແພດຂອງພວກເຮົາຈະສືບຕໍ່ທົບທວນເບິ່ງຫຼັກຖານແລະຂໍ້ມູນຕ່າງໆຈາກທີ່ນີ້ແລະຈາກຕ່າງປະເທດ. ໄດ້ມີການແນະນຳວ່າໃຫ້ທຸກຄົນທີ່ມີສິດຈົ່ງໄປຮັບການສັກຢາວັກຊີນຕ້ານ COVID-19.

ເພື່ອທຳການນັດຈອງໄປສັກຢາວັກຊີນຂອງທ່ານ ໃຫ້ເຂົ້າໄປເບິ່ງທີ່ **health.gov.au**

## ສຳລັບຂໍ້ມູນເພີ່ມເຕີມ

ຖ້າທ່ານມີຄຳຖາມກ່ຽວກັບຢາວັກຊີນຕ້ານ COVID-19, ຈົ່ງໂອ້ລົມກັບທ່ານໝໍຂອງທ່ານ, ເຂົ້າໄປເບິ່ງທີ່ **www.health.gov.au/covid19-vaccines-languages**, ຫຼືໂທຫາສາຍຊ່ວຍເຫຼືອດ້ານໂຄໂຣນາໄວຣັສແຫ່ງຊາດທີ່ເລກໂທ **1800 020 080**. ສຳລັບບໍລິການແປເອກະສານແລະນາຍພາສາ, ໃຫ້ໂທຫາ **131 450**.